International Trade Centre

Funded by the European Union

ໂຄງການຊ່ວຍເຫຼືອວຽກງານການຄ້າ ຂອງ ສະຫະພາບເອີຣົບ ແກ່ ສປປ ລາວ

ພາຍໃຕ້ແຜນງານເຊື່ອມໂຍງພາກພື້ນອາຊຽນ

ໂຄງການ ARISE Plus ປະຈຳ ສປປ ລາວ

# ປື້ມຄູ່ມືສຳລັບການແຈ້ງຂໍ້ມູນທາງດ້ານ ມາດຕະການສຸຂານາໄມ - ສຸຂານາໄມພືດ (SPS) ແລະ ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ (TBT) ແບບປົກກະຕິ ທີ່ນຳໃຊ້ລະບົບ ePing SPS&TBT ແບບໃໝ່ ພາຍໃຕ້ WTO






ກະກຽມໂດຍ ທ່ານ ຈ໋ອດ ໂອປີໂຢ້ (George Opiyo)
ຊ່ຽວຊານສາກົນດ້ານພັນທະຄວາມໂປ່ງໃສ ພາຍໃຕ້ ຂໍ້ຕົກລົງຂອງ WTO ກ່ຽວກັບ TBT ແລະ SPS

ເມສາ 2022

ARISE+ Lao PDR

Funded by the European Union

## ສາລະບານ


ຕົວອັກສອນຫຍໍ້ ແລະ ຊື່ຫຍໍ້ ....iii

1. ຄວາມເປັນມາ .... 4

2. ລະບົບ ePing SPS&TBT ໃໝ່ .... 4

3. ເຄື່ອງມືສຳລັບຜູ້ບໍລິຫານລະບົບ (Admin Panel) .... 5

4. ຂັ້ນຕອນການແນະນຳແຕ່ລະບາດກ້າວສຳລັບ ການຮ່າງ ແລະ ການສົ່ງການແຈ້ງຂໍ້ມູນ SPS ແລະ TBT ແບບປົກກະຕິ ໂດຍນຳໃຊ້ລະບົບ ePing SPS&TBT ໃໝ່ .... 6

4.1. ການກະກຽມ ແລະ ການສົ່ງການແຈ້ງຂໍ້ມູນ SPS ແບບປົກກະຕິ .... 10

4.2. ການກະກຽມ ແລະ ການສົ່ງການແຈ້ງຂໍ້ມູນລະບຽບການ TBT ແບບປົກກະຕິ .... 15

## ຕົວອັກສອນຫຍໍ້ ແລະ ຊື່ຫຍໍ້

| | |
|---|---|
| UN DESA | ສຳນັກງານເສດຖະກິດ ແລະ ສັງຄົມຂອງອົງການສະຫະປະຊາຊາດ |
| DOSM | ກົມມາດຕະຖານ ແລະ ວັດແທກ |
| IMS | ລະບົບການຄຸ້ມຄອງຂໍ້ມູນຂ່າວສານ |
| ITC | ສູນການຄ້າສາກົນ |
| MOAF | ກະຊວງກະສິກຳ ແລະ ປ່າໄມ້ |
| MOIC | ກະຊວງອຸດສາຫະກຳ ແລະ ການຄ້າ |
| NEP | ຈຸດສອບຖາມແຫ່ງຊາດ |
| NNA | ໜ່ວຍງານແຈ້ງຂໍ້ມູນແຫ່ງຊາດ |
| SPS | ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ |
| STC | ບັນຫາການຄ້າສະເພາະ |
| TBT | ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ |
| WTO | ອົງການການຄ້າໂລກ |

## 1. ຄວາມເປັນມາ

ລະບົບການແຈ້ງຂໍ້ມູນກ່ຽວກັບການສົ່ງອອກທີ່ຕິດພັນກັບ SPS ແລະ TBT ເຊັ່ນ: ລະບົບ ePing ຖືກອອກແບບເພື່ອຊ່ວຍໃຫ້ເຈົ້າໜ້າທີ່ຂອງລັດ ແລະ ພາກເອກະຊົນສາມາດຕິດຕາມຂໍ້ມູນຫຼ້າສຸດ ກ່ຽວກັບເງື່ອນໄຂການຄຸ້ມຄອງການຄ້າລະຫວ່າງປະເທດ. ລະບົບດັ່ງກ່າວຖືກສ້າງຂຶ້ນພາຍໃຕ້ການຮ່ວມມື 3 ຝ່າຍ ລະຫວ່າງ ສຳນັກງານເສດຖະກິດ ແລະ ສັງຄົມຂອງອົງການສະຫະປະຊາຊາດ (UN DESA), ອົງການການຄ້າໂລກ (WTO) ແລະ ສູນການຄ້າສາກົນ (ITC) ແລະ WTO ໄດ້ຮັບຮອງເອົາລະບົບດັ່ງກ່າວນີ້ ເປັນລະບົບການແຈ້ງຂໍ້ມູນກ່ຽວກັບການສົ່ງອອກ ໃນເດືອນຕຸລາ ປີ 2016.

ນອກຈາກລະບົບ ePing, ກອງເລຂາ WTO ຍັງໄດ້ສ້າງລະບົບການຄຸ້ມຄອງຂໍ້ມູນຂ່າວສານ SPS (SPS IMS), TBT IMS, ລະບົບການສົ່ງການແຈ້ງຂໍ້ມູນ SPS (SPS NSS) ແລະ TBT NSS. SPS IMS ແລະ TBT IMS ແລ້ວຍັງໄດ້ລວມເອົາການແຈ້ງຂໍ້ມູນທາງການກ່ຽວກັບ SPS ແລະ TBT ທີ່ບັນດາສະມາຊິກ WTO ໄດ້ສົ່ງມາ ຊຶ່ງເລີ່ມຈັດຕັ້ງປະຕິບັດມາແຕ່ປີ 1995 ໃນນັ້ນມີຂໍ້ມູນທາງການອື່ນກ່ຽວກັບ SPS ແລະ TBT ທີ່ບັນດາປະເທດສະມາຊິກ WTO ໄດ້ຍື່ນມາອີກດ້ວຍ.

ລະບົບ ePing ລວມມີ ການແຈ້ງຂໍ້ມູນຈາກ SPS IMS ແລະ TBT IMS ແລະ ລະບົບກໍມີການແຈກຢາຍການແຈ້ງຂໍ້ມູນທີ່ກ່ຽວຂ້ອງ ແລະ ຮ່າງມາດຕະການ SPS ແລະ TBT ທີ່ກຳນົດເງື່ອນໄຂໃໝ່ ແລະ ປັບປຸງເງື່ອນໄຂທີ່ມີຢູ່ ກ່ຽວກັບຜະລິດຕະພັນແບບອັດຕະໂນມັດ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ. ບັນດາປະເທດສະມາຊິກ WTO ກໍໄດ້ນຳໃຊ້ລະບົບ SPS NSS ແລະ TBT NSS ໃນການສົ່ງການແຈ້ງຂໍ້ມູນ SPS ແລະ TBT ແບບອອນລາຍ.

ກອງເລຂາ WTO ຄຸ້ມຄອງ SPS ແລະ TBT IMS ນັບແຕ່ປີ 2009 ເປັນຕົ້ນມາ ຊຶ່ງເປັນໄລຍະເວລາສິບກວ່າປີແລ້ວ. ເນື່ອງຈາກມີການພັດທະນາດ້ານເຕັກໂນໂລຊີ, ກອງເລຂາຈຶ່ງໄດ້ເລີ່ມດຳເນີນການເຊື່ອມໂຍງບັນດາລະບົບຄຸ້ມຄອງຂໍ້ມູນຂ່າວສານ ເຊັ່ນ: SPS IMS, TBT IMS, SPS NSS, TBT NSS ແລະ ePing ເຂົ້າເປັນລະບົບ eTool ໜຶ່ງດຽວໃນປີ 2021. ຈຸດປະສົງຂອງການເຊື່ອມໂຍງລະບົບເຂົ້າກັນນີ້ ກໍເພື່ອຫຼຸດຜ່ອນຄວາມສະຫຼັບຊັບຊ້ອນຂອງບັນດາເຄື່ອງມືເຫຼົ່ານັ້ນ, ຫຼຸດຜ່ອນຂໍ້ຜິດພາດດ້ານຂໍ້ມູນ, ການປັບປຸງໂຄງສ້າງ IT ທີ່ເກົ່າແລ້ວ, ໃຫ້ມີສັນຍາລັກໜຶ່ງດຽວໃນການອະນຸຍາດ ແລະ ຫຼຸດຜ່ອນຄ່າບຳລຸງຮັກສາ.

ກອງເລຂາ WTO ໄດ້ປັບປຸງ ແລະ ຮວບຮວມເອົາລະບົບ SPS IMS, TBT IMS, SPS NSS, TBT NSS ແລະ ePing ເຂົ້າເປັນລະບົບ ePing SPS&TBT ໃໝ່. ກອງເລຂາກໍໄດ້ຢຸດນຳໃຊ້ບັນດາລະບົບ SPS IMS, TBT IMS, SPS NSS, TBT NSS ແລະ ePing ໃນວັນທີ 17 ມີນາ 2022 ແລະ ປ່ຽນແທນດ້ວຍລະບົບ ePing SPS&TBT ແບບໃໝ່ ນັບແຕ່ວັນທີ 28 ມີນາ 2022 ເປັນຕົ້ນມາ.

## 2. ລະບົບ ePing SPS&TBT ໃໝ່

ລະບົບ ePing SPS&TBT ໃໝ່ ມີ 2 ອົງປະກອບດ້ວຍກັນ ຄື: ອົງປະກອບທີໜຶ່ງແມ່ນ ຮູບແບບລະບົບຂໍ້ມູນສາທາລະນະ ແລະ ອີກອົງປະກອບໜຶ່ງແມ່ນ ຮູບແບບລະບົບທີ່ນຳໃຊ້ສະເພາະແຕ່ບັນດາລັດສະມາຊິກ WTO ໃນການສົ່ງການແຈ້ງຂໍ້ມູນ SPS ແລະ TBT, ການຄຸ້ມຄອງຜູ້ນຳໃຊ້ພາຍໃນປະເທດ ແລະ ການອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລືລະຫວ່າງ NEPs/NNAs.

### 2.1. ອົງປະກອບຮູບແບບລະບົບຂໍ້ມູນສາທາລະນະ

ອົງປະກອບດັ່ງກ່າວນີ້ ອຳນວຍຄວາມສະດວກໃຫ້ແກ່ພາກສ່ວນກ່ຽວຂ້ອງ ໃນການຕິດຕາມມາດຕະການສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລະ ມາດຕະການສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ (TBT). ອົງປະກອບດັ່ງກ່າວ ເຮັດໃຫ້ພາກສ່ວນກ່ຽວຂ້ອງສາມາດ:

2.1.1. ຄົ້ນຫາການແຈ້ງຂໍ້ມູນກ່ຽວກັບລະບຽບການທີ່ສ້າງໃໝ່ ແລະ ລະບຽບການທີ່ຖືກປັບປຸງກ່ຽວກັບຜະລິດຕະພັນ;

2.1.2. ຄົ້ນຫາຂໍ້ມູນທີ່ເປັນບັນຫາທາງການຄ້າ ຊຶ່ງຄະນະກຳມະການ SPS ແລະ TBT ຂອງ WTO ໄດ້ນຳໄປພິຈາລະນາ;

2.1.3. ເກັບກຳຂໍ້ມູນຈາກຈຸດສອບຖາມ ແລະ ໜ່ວຍງານແຈ້ງຂໍ້ມູນ SPS ແລະ TBT;

2.1.4. ສະໝັກເປັນສະມາຊິກເພື່ອຮັບການແຈ້ງຂໍ້ມູນຜ່ານທາງອີເມວ ກ່ຽວກັບ ຜະລິດຕະພັນ ແລະ/ຫຼື ຕະຫຼາດ ທີ່ຜູ້ນຳໃຊ້ລະບົບມີຄວາມສົນໃຈ; ແລະ

2.1.5. ຕິດຕາມການແຈ້ງຂໍ້ມູນກ່ຽວກັບຜະລິດຕະພັນ ແລະ/ຫຼື ຕະຫຼາດ ທີ່ຜູ້ສະໝັກເປັນສະມາຊິກມີຄວາມສົນໃຈ;

2.2. ອົງປະກອບຮູບແບບລະບົບທີ່ນຳໃຊ້ສະເພາະ

ອົງປະກອບຮູບແບບລະບົບທີ່ນຳໃຊ້ສະເພາະ ມີໄວ້ສຳລັບເຈົ້າໜ້າທີ່ຂອງລັດ ຜູ້ທີ່ຮັບຜິດຊອບວຽກງານຈຸດສອບຖາມ, ການແຈ້ງຂໍ້ມູນ SPS ແລະ TBT (NEPs), (NNAs) ແລະ ອົງການຄຸ້ມຄອງວຽກງານດັ່ງກ່າວເພື່ອ:

2.2.1. ກະກຽມ ແລະ ຍື່ນການແຈ້ງຂໍ້ມູນ SPS ແລະ TBT;

2.2.2. ຄຸ້ມຄອງຜູ້ນຳໃຊ້ລະບົບພາຍໃນປະເທດທີ່ໄດ້ລົງທະບຽນ ໂດຍຜ່ານການປຶກສາຫາລື;

2.2.3. ຕິດຕໍ່ພົວພັນກັບຄູ່ຮ່ວມງານຢູ່ຕ່າງປະເທດ ໂດຍນຳໃຊ້ຫ້ອງສົນທະນາ (chat) ແລະ ການປຶກສາຫາລືລະຫວ່າງປະເທດ.

ບັນດາເຈົ້າໜ້າທີ່ທີ່ຮັບຜິດຊອບວຽກງານ SPS ແລະ TBT NEPs, NNAs ແລະ ອົງການຄຸ້ມຄອງ ຕ້ອງສົ່ງຄຳຮ້ອງເຖິງກອງເລຂາ WTO ເພື່ອຂໍອະນຸຍາດ ແລະ ຮັບສິດການເປັນຜູ້ບໍລິຫານລະບົບ (admin rights) ກ່ອນຈະສມາດເຂົ້າເຖິງເຄື່ອງມືສຳລັບຜູ້ບໍລິຫານລະບົບ (**Admin Panel**).

## 3. ເຄື່ອງມືສຳລັບຜູ້ບໍລິຫານລະບົບ (Admin Panel)

ເຄື່ອງມືສຳລັບຜູ້ບໍລິຫານ ແບ່ງອອກເປັນ 2 ອົງປະກອບ ຄື: ການສົ່ງການແຈ້ງຂໍ້ມູນ ແລະ ການຕິດຕໍ່ພົວພັນ ສາມາດເບິ່ງຢູ່ໃນຮູບຖ່າຍໜ້າຈໍຂ້າງລຸ່ມ. ອົງປະກອບການສົ່ງການແຈ້ງຂໍ້ມູນ ແມ່ນນຳໃຊ້ໂດຍສະມາຊິກ WTO ສຳລັບຍື່ນການແຈ້ງຂໍ້ມູນທີ່ກ່ຽວຂ້ອງກັບ SPS ແລະ TBT, ສຳລັບອົງປະກອບການຕິດຕໍ່ພົວພັນ ແມ່ນນຳໃຊ້ໂດຍ SPS ແລະ TBT NEPs ແລະ NNAs ໃນການຄຸ້ມຄອງຜູ້ນຳໃຊ້ພາຍໃນປະເທດທີ່ໄດ້ລົງທະບຽນ ແລະ ຕິດຕໍ່ພົວພັນກັບບັນດາຄູ່ຮ່ວມງານຢູ່ລັດສະມາຊິກອື່ນໆຂອງ WTO.




## 4. ຂັ້ນຕອນການແນະນຳແຕ່ລະບາດກ້າວສຳລັບ ການຮ່າງ ແລະ ການສົ່ງການແຈ້ງຂໍ້ມູນ SPS ແລະ TBT ແບບປົກກະຕິ ໂດຍນຳໃຊ້ລະບົບ ePing SPS&TBT ໃໝ່

URL (ທີ່ຢູ່ເວັບໄຊ້) ຂອງລະບົບ ePing SPS&TBT ໃໝ່ https://eping.wto.org/. ໃຫ້ກົດໃສ່ URL ນີ້ເພື່ອເຂົ້າເຖິງໜ້າຫຼັກ (Dashboard) ຂອງລະບົບ ePing SPS& TBT ໃໝ່ ຊຶ່ງສາມາດເຫັນຢູ່ຮູບຖ່າຍໜ້າຈໍ ຂ້າງລຸ່ມ.

ເພື່ອເຂົ້າເຖິງເຄື່ອງມືສຳລັບຜູ້ບໍລິຫານ, ໃຫ້ກົດປຸ່ມ Login.




ໃຫ້ປ້ອນ ທີ່ຢູ່ອີເມວ **(email address)** ຂອງທ່ານໃສ່ ແລະ ໃຫ້ກົດປຸ່ມ **Next** ທີ່ເຫັນຢູ່ຮູບຖ່າຍໜ້າຈໍ ຂ້າງລຸ່ມ.




ໃຫ້ປ້ອນລະຫັດຜ່ານ (password) ຂອງທ່ານ ທີ່ເຫັນຢູ່ຮູບຖ່າຍໜ້າຈໍ ຂ້າງລຸ່ມ.




ພາຍຫຼັງເຂົ້າສູ່ລະບົບ ໂດຍການປ້ອນອີເມວ ແລະ ລະຫັດຜ່ານໃສ່ແລ້ວ, ການເຂົ້າເຖິງເຄື່ອງມືສໍາລັບຜູ້ບໍລິຫານ ຈະປະກົດຂຶ້ນມາ ຕາມທີ່ເຫັນຢູ່ຮູບຖ່າຍໜ້າຈໍ ຂ້າງລຸ່ມ.




ເພື່ອເຂົ້າເຖິງເຄື່ອງມືສຳລັບຜູ້ບໍລິຫານນັ້ນ ໃຫ້ກົດປຸ່ມລູກສອນທີ່ຊີ້ລົງລຸ່ມ ດັ່ງທີ່ເຫັນຢູ່ຮູບຖ່າຍໜ້າຈໍ ຂ້າງລຸ່ມ.




ເພື່ອເລີ່ມຕົ້ນຮ່າງການແຈ້ງຂໍ້ມູນ SPS ຫຼື TBT ໃຫ້ກົດໃສ່ ການສົ່ງການແຈ້ງຂໍ້ມູນ (Submit notifications) ດັ່ງທີ່ເຫັນຢູ່ຮູບຖ່າຍໜ້າຈໍ ຂ້າງລຸ່ມ.




ໃຫ້ເລືອກເອົາປະເພດການແຈ້ງຂໍ້ມູນທີ່ທ່ານຢາກສົ່ງ ດັ່ງທີ່ເຫັນຢູ່ຮູບຖ່າຍໜ້າຈໍ ຂ້າງລຸ່ມ.



## 4.1. ການກະກຽມ ແລະ ການສົ່ງການແຈ້ງຂໍ້ມູນ SPS ແບບປົກກະຕິ

### 4.1.1. ຢູ່ໃນເຄື່ອງມືສຳລັບຜູ້ບໍລິຫານ ໃຫ້ກົດປຸ່ມ SPS




### 4.1.2. ໃຫ້ກົດປຸ່ມເຄື່ອງໝາຍ (+) ເພື່ອເລີ່ມຕົ້ນການຮ່າງ (ການກະກຽມ) ການແຈ້ງຂໍ້ມູນ SPS ແບບປົກກະຕິ




ໜ້າເວັບໄຊ້ການແຈ້ງຂໍ້ມູນລະບຽບການ **SPS** ປະກົດຂຶ້ນໜ້າຈໍ




ໃຫ້ກົດປຸ່ມ **Expand/Collapse** ເພື່ອຂະຫຍາຍເນື້ອທີ່ໃນການປ້ອນຂໍ້ມູນທີ່ຕ້ອງການ






ໃຫ້ປ້ອນຂໍ້ມູນໃສ່ຫ້ອງທັງໝົດ ຢູ່ໃນແບບຟອມການແຈ້ງຂໍ້ມູນ SPS ປົກກະຕິ




ໃຫ້ກົດປຸ່ມບັນທຶກ ເພື່ອບັນທຶກຮ່າງການແຈ້ງຂໍ້ມູນ ແລະ ສືບຕໍ່ການຮ່າງການແຈ້ງຂໍ້ມູນ **(save & continue)**




ໃຫ້ກົດປຸ່ມບັນທຶກ ແລະ ດຳເນີນການແຈ້ງຂໍ້ມູນໃຫ້ສຳເລັດ **(Save & Complete)**




- ໃຫ້ກົດປຸ່ມຕົກລົງ **(Yes)** ເພື່ອດຳເນີນການຮ່າງການແຈ້ງຂໍ້ມູນໃຫ້ສຳເລັດ
- ຢູ່ໜ້າເວັບໄຊ້ ມີການບອກວ່າ "ການແຈ້ງຂໍ້ມູນສຳເລັດ"




ໝາຍເຫດ: ການແຈ້ງຂໍ້ມູນທີ່ສົ່ງກັບໄປເພື່ອກວດສອບຄືນ ແມ່ນເອົາລົງຢູ່ໃນຫ້ອງ (ຮ່າງ) ການແຈ້ງຂໍ້ມູນແບບປົກກະຕິ

## 4.2. **ການກະກຽມ ແລະ ການສົ່ງການແຈ້ງຂໍ້ມູນລະບຽບການ TBT ແບບປົກກະຕິ**

4.2.1. ຢູ່ໃນເຄື່ອງມືສຳລັບຜູ້ບໍລິຫານ ໃຫ້ກົດປຸ່ມ TBT

**ໝາຍເຫດ:** ປຸ່ມທີ່ຖືກເລືອກເອົານັ້ນ ມີການທາສີຟ້າໄວ້

4.2.2. ໃຫ້ກົດປຸ່ມ (+) ເພື່ອເລີ່ມຕົ້ນການຮ່າງ (ການກະກຽມ) ການແຈ້ງຂໍ້ມູນ TBT ແບບປົກກະຕິ




ໜ້າເວັບໄຊ້ການແຈ້ງຂໍ້ມູນລະບຽບການ **TBT** ປະກົດຂຶ້ນຢູ່ໜ້າຈໍ



ໃຫ້ກົດປຸ່ມຂະຫຍາຍ/ຫຍໍ້ເຂົ້າ **(Expand/Collapse)** ເພື່ອເຂົ້າເຖິງເນື້ອທີ່ໃນການປ້ອນຂໍ້ມູນ ສໍາລັບການແຈ້ງຂໍ້ມູນ




ບັນດາຫ້ອງຢູ່ໃນແບບຟອມ ປະກົດຂຶ້ນຢູ່ໜ້າຈໍ ເພື່ອໃຫ້ປ້ອນຂໍ້ມູນໃສ່









ໃຫ້ກົດປຸ່ມບັນທຶກ **(save)** ຮ່າງການແຈ້ງຂໍ້ມູນ ແລະ ສືບຕໍ່ຮ່າງການແຈ້ງຂໍ້ມູນ

ການຢືນຢັນວ່າ ການບັນທຶກຮ່າງການແຈ້ງຂໍ້ມູນສຳເລັດແລ້ວ




ໃຫ້ກົດປຸ່ມບັນທຶກ ແລະ ສຳເລັດ **(save & complete)** ຮ່າງການແຈ້ງຂໍ້ມູນ

ລະບົບ **ePing SPS&TBT** ມີການແຈ້ງເຕືອນໃຫ້ຜູ້ນຳໃຊ້ລະບົບ ຢືນຢັນເຈຕະນາໃນການບັນທຶກຮ່າງການແຈ້ງຂໍ້ມູນ




- ໃຫ້ກົດປຸ່ມຕົກລົງ **(Yes)** ເພື່ອດຳເນີນການຮ່າງການແຈ້ງຂໍ້ມູນໃຫ້ສຳເລັດ
- ໜ້າເວັບໄຊ້ການແຈ້ງຂໍ້ມູນທີ່ດຳເນີນການສຳເລັດແລ້ວ ຖືກສະແດງຢູ່ໜ້າຈໍ

ຮ່າງການແຈ້ງຂໍ້ມູນຖືກດຳເນີນການສຳເລັດແລ້ວ




ໃຫ້ກົດປຸ່ມ ສ້າງການແຈ້ງຂໍ້ມູນໃນຮູບແບບ **MS Word format**

ໃຫ້ກົດປຸ່ມ ສົ່ງການແຈ້ງຂໍ້ມູນເຖິງ **WTO CRN**

ໃຫ້ກົດປຸ່ມ ສົ່ງການແຈ້ງຂໍ້ມູນກັບໄປຫາຜູ້ຮ່າງ ເພື່ອດຳເນີນການກວດສອບຄືນ




ໃຫ້ກົດປຸ່ມ ຕົກລົງ (Yes) ເພື່ອສົ່ງການແຈ້ງຂໍ້ມູນກັບຫາຜູ້ຮ່າງ ເພື່ອກວດສອບຄືນ

ການແຈ້ງຂໍ້ມູນຖືກສົ່ງກັບຄືນໄປຫາຜູ້ຮ່າງ ເພື່ອດຳເນີນການກວດສອບຄືນ ຖືກເອົາລົງໃສ່ຫ້ອງ (ຮ່າງ) ການແຈ້ງຂໍ້ມູນແບບປົກກະຕິ



# ປື້ມຄູ່ມືສໍາລັບການແຈ້ງຂໍ້ມູນທາງດ້ານ ມາດຕະການສຸຂານາໄມ - ສຸຂານາໄມພືດ (SPS) ແລະ ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ (TBT) ແບບປົກກະຕິ ທີ່ນໍາໃຊ້ລະບົບ ePing SPS&TBT ແບບໃໝ່ ພາຍໃຕ້ WTO

International Trade Centre

Funded by the European Union

ພາຍໃຕ້ການສະໜັບສະໜູນຂອງ ໂຄງການ ARISE PLUS ປະຈໍາ ສປປ ລາວ